ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 117 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 12 ສິງຫາ 2024

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 123/ສພຊ, ລົງວັນທີ 28 ມິຖຸນາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 17/ຄປຈ, ລົງວັນທີ 29 ກໍລະກົດ 2024.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ສະພາແຫ່ງຊາດ**

ເລກທີ 123 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 28/06/24

# ມະຕິ
## ກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ ໃນວາລະຂອງກອງປະຊຸມຄັ້ງວັນທີ 20 ມິຖຸນາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນເຊົ້າຂອງວັນທີ 28 ມິຖຸນາ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 55 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 28 ມິຖຸນາ 2024

# ກົດໝາຍ
# ວ່າດ້ວຍຊັບພະຍາກອນທີ່ເປັນຢາ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຊັບພະຍາກອນທີ່ເປັນຢາ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ດຳເນີນໄປຢ່າງ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຊັບພະຍາກອນທີ່ເປັນຢາ ບໍ່ໃຫ້ ບົກແຫ້ງ, ສູນພັນ ໃຫ້ມີຄວາມອຸດົມສົມບູນ ແລະ ຍືນຍົງ, ຮັບປະກັນການນຳໃຊ້ຊັບພະຍາກອນທີ່ເປັນຢາ ທີ່ມີຄຸນນະພາບ ແລະ ປອດໄພ ເຂົ້າໃນການປິ່ນປົວ, ຮັກສາສຸຂະພາບຂອງຄົນ, ເຮັດໃຫ້ພົນລະເມືອງ ມີສຸຂະພາບແຂງແຮງ, ສ້າງເປັນຜະລິດຕະພັນສົ່ງອອກ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ຊັບພະຍາກອນທີ່ເປັນຢາ**

ຊັບພະຍາກອນທີ່ເປັນຢາ ແມ່ນ ພືດ, ຕົ້ນໄມ້, ສັດ, ແຮ່ທາດ ລວມທັງ ຊາກ, ຊິ້ນສ່ວນ ທີ່ມີສັບພະຄຸນທາງດ້ານການຢາ ຊຶ່ງເກີດຂຶ້ນ ແລະ ຂະຫຍາຍແນວພັນຢູ່ໃນທຳມະຊາດ ຫຼື ປູກ, ລ້ຽງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພືດ, ຕົ້ນໄມ້ ທີ່ເປັນຢາ** ໝາຍເຖິງ ພືດ, ຕົ້ນໄມ້ ທີ່ມີສັບພະຄຸນທາງດ້ານການຢາ ຊຶ່ງເກີດຂຶ້ນຕາມທຳມະຊາດ ຫຼື ປູກ, ລ້ຽງ ເຊັ່ນ ຕົ້ນ, ລຳ, ເປືອກ, ເຄືອ, ຮາກ, ຫົວ, ໜໍ່, ກິ່ງ, ກ້ານ, ແກ່ນ, ຕາ, ຍອດ, ໃບ, ດອກ, ໝາກ, ເມັດ ຫຼື ແກ່ນ, ກາຝາກພືດ, ເຊື້ອເຫັດ, ສະປໍ, ເນື້ອເຫຍື່ອ, ນ້ຳມັນ, ຢາງ ແລະ ອື່ນໆ;

2. **ສັດທີ່ເປັນຢາ** ໝາຍເຖິງ ສັດທີ່ມີສັບພະຄຸນທາງດ້ານການຢາ ຊຶ່ງເກີດຂຶ້ນຕາມທຳມະຊາດ ຫຼື ລ້ຽງ ເປັນຕົ້ນ ສັດລ້ຽງລູກດ້ວຍນ້ຳນົມ, ສັດປີກ, ສັດເລືອຄານ, ສັດນ້ຳ, ສັດເຄິ່ງບົກເຄິ່ງນ້ຳ, ແມງໄມ້ ລວມທັງຊາກ ຫຼື ຊິ້ນສ່ວນຂອງສັດ;

3. **ແຮ່ທາດທີ່ເປັນຢາ** ໝາຍເຖິງ ທາດ ຫຼື ສານປະກອບອິນຊີທີ່ມີສັບພະຄຸນທາງດ້ານການຢາ ຊຶ່ງເກີດຂຶ້ນຕາມທໍາມະຊາດ ມີໂຄງສ້າງ, ອົງປະກອບ ແລະ ມີຄຸນສົມບັດສະເພາະຕົວ;

4. **ຜະລິດຕະພັນຢາພື້ນເມືອງ** ໝາຍເຖິງ ຢາທີ່ໄດ້ມາຈາກ ຊັບພະຍາກອນທີ່ເປັນຢາ ຊຶ່ງໄດ້ນໍາມາປຸງແຕ່ງ, ຜະລິດ ເປັນຜະລິດຕະພັນຢາພື້ນເມືອງສໍາເລັດຮູບ ໃນຮູບແບບດ່ຽວ ແລະ ໃນຮູບແບບປະສົມ ທີ່ມີສ່ວນປະກອບປະລິມານ ຕາມຄວາມແຮງ, ຂະໜາດບັນຈຸ, ຫຸ້ມຫໍ່ ແລະ ຕິດສະຫຼາກ;

5. **ຜະລິດຕະພັນການແພດ** ໝາຍເຖິງ ວັດຖຸ ຫຼື ທາດໃດໜຶ່ງ ທີ່ນໍາໃຊ້ເຂົ້າໃນວົງການແພດ ລວມທັງຜະລິດຕະພັນໃດໜຶ່ງ ທີ່ນໍາໃຊ້ທົ່ວໄປໃນສັງຄົມ ເຊັ່ນ ຜະລິດຕະພັນເສີມສຸຂະພາບ ແລະ ເຄື່ອງສໍາອາງ;

6. **ຜະລິດຕະພັນເສີມສຸຂະພາບ** ໝາຍເຖິງ ຜະລິດຕະພັນ ທີ່ໄດ້ຈາກ ພືດ, ຕົ້ນໄມ້, ແຮ່ທາດ, ສັດ ແລະ ວິຕາມິນຕ່າງໆ ທີ່ໄດ້ຜ່ານການປຸງແຕ່ງ, ຫຸ້ມຫໍ່ ແລະ ຕິດສະຫຼາກຕົ້ນຕໍ ເພື່ອນໍາໃຊ້ ເຂົ້າໃນການເສີມສ້າງບາງຈຸລັງໃນຮ່າງກາຍ ແຕ່ຫາກບໍ່ແມ່ນນໍາໃຊ້ ເພື່ອກັນພະຍາດ ແລະ ປິ່ນປົວ;

7. **ການສົ່ງອອກຄືນ** ໝາຍເຖິງ ການນໍາສົ່ງອອກຊັບພະຍາກອນທີ່ເປັນຢາ ກັບຄືນປະເທດຕົ້ນທາງພາຍຫຼັງສິ້ນສຸດຈຸດປະສົງຂອງການນໍາໃຊ້ ເປັນຕົ້ນ ການວາງສະແດງ, ການຄົ້ນຄວ້າວິທະຍາສາດ ຕາມທີ່ໄດ້ກໍານົດໄວ້;

8. **ການຖອດຣິດ** ໝາຍເຖິງ ການແຍກທາດອອກຈາກຊັບພະຍາກອນທີ່ເປັນຢາ ທີ່ມີລັກສະນະລວມສ່ວນ ແລະ ມີສ່ວນປະກອບຫຼາຍທາດປະສົມຢູ່ນໍາທີ່ໄດ້ພາຍຫຼັງການຖອດຣິດ;

9. **ການສະກັດ** ໝາຍເຖິງ ການແຍກທາດໃດໜຶ່ງອອກຈາກການລວມສ່ວນທີ່ໄດ້ຮັບຈາກການຖອດຣິດ ເພື່ອສະກັດໃຫ້ໄດ້ທາດດ່ຽວທີ່ມີສັບພະຄຸນທາງດ້ານການຢາ ຊຶ່ງມີລັກສະນະສະເພາະ;

10. **ເຂດຫວງຫ້າມເດັດຂາດ** ໝາຍເຖິງ ເຂດຊັບພະຍາກອນທີ່ເປັນຢາ ທີ່ມີຄວາມອຸດົມສົມບູນ ໂດຍສະເພາະ ເຂດທີ່ມີຊັບພະຍາກອນທີ່ເປັນຢາບັນຊີ I ຊຶ່ງບໍ່ອະນຸຍາດໃຫ້ດໍາເນີນກິດຈະການ ກ່ຽວກັບຊັບພະຍາກອນທີ່ເປັນຢາ, ຍົກເວັ້ນການສຶກສາຄົ້ນຄວ້າດ້ານວິທະຍາສາດ ແລະ ການທ່ອງທ່ຽວທໍາມະຊາດ;

11. **ເຂດຄຸ້ມຄອງການນໍາໃຊ້** ໝາຍເຖິງ ເຂດຊັບພະຍາກອນທີ່ເປັນຢາ ຊຶ່ງລັດຈັດສັນໃຫ້ນໍາໃຊ້ໄດ້ ເປັນຕົ້ນ ເຂດທີ່ມີຊັບພະຍາກອນທີ່ເປັນຢາ ບັນຊີ II ແລະ ບັນຊີ III ພ້ອມທັງມີການຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນທີ່ເປັນຢາ ໃຫ້ມີຄວາມຍືນຍົງ, ເປັນເຂດທີ່ສາມາດ ເກັບກູ້, ປູກ ພືດ, ຕົ້ນໄມ້ ທີ່ເປັນຢາ ແຕ່ບໍ່ອະນຸຍາດໃຫ້ ຂຸດຄົ້ນ, ເກັບກູ້ ເພື່ອດໍາເນີນທຸລະກິດ;

12. ໄຊເຕັດ (CITES: Convention on International Trade in Endangered Species of Wild Fauna and Flora) ໝາຍເຖິງ ສົນທິສັນຍາວ່າດ້ວຍການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ ຊຶ່ງຖືກຮັບຮອງ ຢູ່ ວໍຊິງຕັນດີຊີ ຄັ້ງວັນທີ 3 ມີນາ 1973 ແລະ ສປປ ລາວ ເຂົ້າເປັນພາຄີ ໃນວັນທີ 1 ມີນາ 2004.

ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ

ລັດ ໃຫ້ຄວາມສໍາຄັນ ຕໍ່ການ ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ຊັບພະຍາກອນທີ່ເປັນຢາ ໂດຍຖືເອົາການຄົ້ນຄວ້າດ້ານວິທະຍາສາດ, ການສ້າງສວນອະນຸລັກຊີວະນານາພັນທີ່ເປັນຢາ, ການສ້າງສວນປູກ ພືດ ແລະ ຕົ້ນໄມ້ທີ່ເປັນຢາ, ການລ້ຽງສັດທີ່ເປັນຢາ, ການສໍາຫຼວດ, ການຟື້ນຟູ, ການຂຶ້ນບັນຊີ ແຮ່ທາດ ທີ່ເປັນຢາເປັນສໍາຄັນ.

ລັດ ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກ ໃຫ້ແກ່ວຽກງານຊັບພະຍາກອນທີ່ເປັນຢາ ດ້ວຍການວາງນະໂຍບາຍ, ປະກອບບຸກຄະລາກອນ, ສະໜອງ ຂໍ້ມູນ ຂ່າວສານ, ງົບປະມານ, ພາຫະນະ, ວັດຖຸປະກອນ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ຈໍາເປັນໃຫ້ແກ່ການເຄື່ອນໄຫວວຽກງານຊັບພະຍາກອນທີ່ເປັນຢາ.

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນໃສ່ການ ປູກ, ລ້ຽງ, ຄົ້ນຄວ້າ, ວິໄຈ, ທົດລອງ, ປຸງແຕ່ງ ແລະ ຜະລິດ ຊັບພະຍາກອນທີ່ເປັນຢາ ເປັນຜະລິດຕະພັນຢາພື້ນເມືອງ ສໍາເລັດຮູບ ຫຼື ເຄິ່ງສໍາເລັດຮູບ ແລະ ຜະລິດຕະພັນການແພດ ທີ່ມີຄຸນນະພາບ ແລະ ໄດ້ມາດຕະຖານ ເພື່ອນໍາໃຊ້ພາຍໃນ ແລະ ສົ່ງອອກ.

### ມາດຕາ 5 ຫຼັກການກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ

ວຽກງານຊັບພະຍາກອນທີ່ເປັນຢາ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາສາທາລະນະສຸກ, ແຜນພັດທະນາຂອງຂະແໜງການອື່ນທີ່ກ່ຽວຂ້ອງ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;
2. ຮັບປະກັນການຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນຄວາມ ສະເໝີພາບ, ຖືກຕ້ອງ, ຍຸຕິທໍາ, ໂປ່ງໃສ ແລະ ສາມາດກວດສອບໄດ້;
4. ຮັບປະກັນການນໍາໃຊ້ຊັບພະຍາກອນທີ່ເປັນຢາ ໃຫ້ມີປະສິດທິພາບ, ປະສິດທິຜົນ, ປະຢັດ, ບໍ່ໃຫ້ບົກແຫ້ງ, ສູນພັນ, ປອດໄພ ແລະ ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ;
5. ອະນຸລັກ, ປົກປັກຮັກສາ, ພັດທະນາ ຊັບພະຍາກອນທີ່ເປັນຢາ ໃຫ້ອຸດົມສົມບູນ ຕາມທິດສີຂຽວ ແລະ ຍືນຍົງ;
6. ຮັບປະກັນການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ.

### ມາດຕາ 6 ພັນທະຂອງພົນລະເມືອງ

ພົນລະເມືອງທຸກຄົນ ມີພັນທະໃນການປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ຊັບພະຍາກອນທີ່ເປັນຢາ ບໍ່ໃຫ້ ບົກແຫ້ງ, ສູນພັນ ແລະ ໃຫ້ມີຄວາມອຸດົມສົມບູນ, ຍືນຍົງ ແລະ ປະຕິບັດໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 7 ຂອບເຂດການນໍາໃຊ້ກົດໝາຍ

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານຊັບພະຍາກອນທີ່ເປັນຢາ ຢູ່ ສປປ ລາວ.

### ມາດຕາ 8 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ຄົ້ນຄວ້າດ້ານວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ພັດທະນາບຸກຄະລາກອນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄຸນນະພາບ, ເຂັ້ມແຂງ, ທັນສະໄໝ ແລະ ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ພາກທີ II
## ປະເພດຊັບພະຍາກອນທີ່ເປັນຢາ

**ມາດຕາ 9 ປະເພດຊັບພະຍາກອນທີ່ເປັນຢາ**

ຊັບພະຍາກອນທີ່ເປັນຢາ ແບ່ງອອກເປັນ ສາມປະເພດ ດັ່ງນີ້:

1. ຊັບພະຍາກອນທີ່ເປັນຢາ ປະເພດຫວງຫ້າມ ຊຶ່ງແມ່ນ ຊັບພະຍາກອນທີ່ເປັນຢາບັນຊີ I;
2. ຊັບພະຍາກອນທີ່ເປັນຢາ ປະເພດຄຸ້ມຄອງ ຊຶ່ງແມ່ນ ຊັບພະຍາກອນທີ່ເປັນຢາບັນຊີ II;
3. ຊັບພະຍາກອນທີ່ເປັນຢາ ປະເພດທົ່ວໄປ ຊຶ່ງແມ່ນ ຊັບພະຍາກອນທີ່ເປັນຢາບັນຊີ III.

ກະຊວງສາທາລະນະສຸກ ເປັນຜູ້ຂຶ້ນ ແລະ ຮັບຮອງບັນຊີ ຊັບພະຍາກອນທີ່ເປັນຢາ ໃນແຕ່ລະໄລຍະ ໂດຍປະສານສົມທົບກັບກະຊວງກະສິກຳ ແລະ ປ່າໄມ້, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງອື່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 10 ຊັບພະຍາກອນທີ່ເປັນຢາ ບັນຊີ I**

ຊັບພະຍາກອນທີ່ເປັນຢາ ບັນຊີ I ແມ່ນ ຊັບພະຍາກອນທີ່ເປັນຢາ ທີ່ຫາຍາກໃນທຳມະຊາດ ທີ່ໃກ້ຈະບົກແຫ້ງ ຫຼື ສູນພັນ, ເກີດຢູ່ໃນບາງທ້ອງຖິ່ນ, ມີຄຸນຄ່າສູງ, ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ.

**ມາດຕາ 11 ຊັບພະຍາກອນທີ່ເປັນຢາ ບັນຊີ II**

ຊັບພະຍາກອນທີ່ເປັນຢາ ບັນຊີ II ແມ່ນ ຊັບພະຍາກອນທີ່ເປັນຢາ ທີ່ມີຢູ່ໃນທຳມະຊາດ ໃນບາງທ້ອງຖິ່ນ, ມີຄວາມສ່ຽງໃນການບົກແຫ້ງ ຫຼື ສູນພັນ, ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະ ສາມາດຜະລິດເປັນສິນຄ້າ ຮັບໃຊ້ພາຍໃນ ແລະ ສົ່ງອອກ.

**ມາດຕາ 12 ຊັບພະຍາກອນທີ່ເປັນຢາ ບັນຊີ III**

ຊັບພະຍາກອນທີ່ເປັນຢາ ບັນຊີ III ແມ່ນ ຊັບພະຍາກອນທີ່ເປັນຢາ ທີ່ມີຢູ່ໃນທຳມະຊາດ ຢ່າງກວ້າງຂວາງ, ບໍ່ບົກແຫ້ງ ແລະ ບໍ່ມີຄວາມສ່ຽງຕໍ່ການສູນພັນ, ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະ ສາມາດຜະລິດເປັນສິນຄ້າ ຮັບໃຊ້ພາຍໃນ ແລະ ສົ່ງອອກ.

## ພາກທີ III
## ກິດຈະການຊັບພະຍາກອນທີ່ເປັນຢາ
### ໝວດທີ 1
### ການຄຸ້ມຄອງຊັບພະຍາກອນທີ່ເປັນຢາ

**ມາດຕາ 13 ການຄຸ້ມຄອງຊັບພະຍາກອນທີ່ເປັນຢາ**

ການຄຸ້ມຄອງຊັບພະຍາກອນທີ່ເປັນຢາ ປະກອບດ້ວຍກິດຈະການ ດັ່ງນີ້:

1. ການສຳຫຼວດຊັບພະຍາກອນທີ່ເປັນຢາ;

2. ການຂຶ້ນທະບຽນ ແລະ ແຈ້ງບັນຊີ ຊັບພະຍາກອນທີ່ເປັນຢາ;
3. ການສ້າງແຜນຈັດສັນ ແລະ ຄຸ້ມຄອງ ຊັບພະຍາກອນທີ່ເປັນຢາ;
4. ການກຳນົດຖິ່ນກຳເນີດ ແລະ ເຂດອະນຸລັກພັນ;
5. ການສ້າງແຜນ ແລະ ການອະນຸຍາດ ຂຸດຄົ້ນ, ເກັບກູ້;
6. ການຂຸດຄົ້ນ, ເກັບກູ້;
7. ການເກັບຮັກສາ, ການຖອດຮິດ ແລະ ການສະກັດ;
8. ການປຸງແຕ່ງ ແລະ ຜະລິດ;
9. ການ ຊື້ ຂາຍ ຊັບພະຍາກອນທີ່ເປັນຢາ;
10. ການສ້າງສວນ ຫຼື ຟາມປູກ ພືດ ແລະ ຕົ້ນໄມ້ ທີ່ເປັນຢາ;
11. ການສ້າງພິພິທະພັນ;
12. ການເຄື່ອນຍ້າຍຊັບພະຍາກອນທີ່ເປັນຢາ;
13. ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ຊັບພະຍາກອນທີ່ເປັນຢາ;
14. ການສ້າງ ແລະ ຄຸ້ມຄອງແຫຼ່ງແນວພັນ ພືດ, ຕົ້ນໄມ້ ທີ່ເປັນຢາ;
15. ລະບົບ ຂໍ້ມູນ ຂ່າວສານ ກ່ຽວກັບຊັບພະຍາກອນທີ່ເປັນຢາ;
16. ກິດຈະການອື່ນທີ່ເຫັນວ່າຈຳເປັນ.

**ມາດຕາ 14 ການສຳຫຼວດຊັບພະຍາກອນທີ່ເປັນຢາ**

ການສຳຫຼວດຊັບພະຍາກອນທີ່ເປັນຢາ ແມ່ນ ການຊອກຄົ້ນ, ເກັບກຳຂໍ້ມູນ ກ່ຽວກັບ ຊະນິດ, ຈຳນວນ, ປະລິມານ, ສະພາບການຄົງຕົວ, ການຂະຫຍາຍຕົວ, ຄວາມໜາແໜ້ນ ແລະ ຂໍ້ມູນອື່ນ ກ່ຽວກັບຊັບພະຍາກອນທີ່ເປັນຢາ ເພື່ອເປັນຂໍ້ມູນໃນການ ຮຽນຮູ້, ການສຶກສາຄົ້ນຄວ້າດ້ານວິທະຍາສາດ, ການຂຶ້ນທະບຽນ, ການຂຶ້ນບັນຊີ, ການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ ຊັບພະຍາກອນທີ່ເປັນຢາ.

ຂະແໜງການສາທາລະນະສຸກ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການພະລັງງານ ແລະ ບໍ່ແຮ່, ຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ, ສ້າງລະບົບຖານ ຂໍ້ມູນ ຂ່າວສານ ແລະ ສ້າງແຜນ ຈັດສັນ ແລະ ຄຸ້ມຄອງຊັບພະຍາກອນທີ່ເປັນຢາ.

**ມາດຕາ 15 ການຂຶ້ນທະບຽນ ແລະ ແຈ້ງບັນຊີ ຊັບພະຍາກອນທີ່ເປັນຢາ**

ການຂຶ້ນທະບຽນຊັບພະຍາກອນທີ່ເປັນຢາ ແມ່ນ ການເກັບກຳປະຫວັດ ແລະ ຂໍ້ມູນອື່ນຂອງຊັບພະຍາກອນທີ່ເປັນຢາ ລວມທັງ ຊາກ, ຊິ້ນສ່ວນ ຊັບພະຍາກອນທີ່ເປັນຢາ ເຊັ່ນ ຊື່ທ້ອງຖິ່ນ, ຊື່ວິທະຍາສາດ, ສ່ວນປະກອບ, ຖິ່ນກຳເນີດ, ປະເພດ, ສາຍພັນ, ແຫຼ່ງທີ່ມາ, ຕຳນິຮູບປະພັນ, ຈຸດພິເສດ, ເອກະລັກ, ພາກສ່ວນ ທີ່ນຳໃຊ້ ແລະ ສັບພະຄຸນ ເພື່ອຂຶ້ນທະບຽນ ຊັບພະຍາກອນທີ່ເປັນຢາ.

ການແຈ້ງບັນຊີຊັບພະຍາກອນທີ່ເປັນຢາ ແມ່ນ ການລາຍງານປະຫວັດ ແລະ ຂໍ້ມູນອື່ນຂອງຊັບພະຍາກອນທີ່ເປັນຢາ ທີ່ນຳມາ ປູກ, ລ້ຽງ ໃນສວນ, ຟາມ ແລະ ສະຖານທີ່ອື່ນ ທີ່ໄດ້ຮັບອະນຸຍາດ ລວມທັງການຄອບຄອງ ຊາກ, ຊິ້ນສ່ວນ ເພື່ອແຈ້ງຂຶ້ນບັນຊີຊັບພະຍາກອນທີ່ເປັນຢາ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງຂຶ້ນທະບຽນ ແລະ ແຈ້ງບັນຊີ ຊັບພະຍາກອນທີ່ເປັນຢາ ທີ່ມີຢູ່ໃນການຄອບຄອງຂອງຕົນ ນຳຫ້ອງການສາທາລະນະສຸກຂັ້ນເມືອງ.

ສຳລັບຊັບພະຍາກອນທີ່ເປັນຢາ ລວມທັງ ຊາກ, ຊິ້ນສ່ວນ ຊັບພະຍາກອນທີ່ເປັນຢາ ທີ່ຢູ່ໃນບັນຊີໄຊເຕັດ ໃຫ້ຂຶ້ນທະບຽນ ແລະ ແຈ້ງບັນຊີ ນຳໜ່ວຍງານຄຸ້ມຄອງໄຊເຕັດ ຕາມລະບຽບການທີ່ກ່ຽວຂ້ອງ.

ສຳລັບຂັ້ນຕອນ, ເງື່ອນໄຂ ການຂຶ້ນທະບຽນ ແລະ ແຈ້ງບັນຊີຊັບພະຍາກອນທີ່ເປັນຢາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 ການສ້າງແຜນຈັດສັນ ແລະ ຄຸ້ມຄອງ ຊັບພະຍາກອນທີ່ເປັນຢາ**

ການສ້າງແຜນຈັດສັນ ແລະ ຄຸ້ມຄອງ ຊັບພະຍາກອນທີ່ເປັນຢາ ແມ່ນ ການກຳນົດແຜນພັດທະນາຊັບພະຍາກອນທີ່ເປັນຢາ ໂດຍອີງໃສ່ຂໍ້ມູນການສຳຫຼວດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້ ເພື່ອຮັບປະກັນການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຊັບພະຍາກອນທີ່ເປັນຢາ ໃຫ້ມີຄວາມຍືນຍົງ ໂດຍກຳນົດ ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນຳໃຊ້, ເຂດຂຸດຄົ້ນ, ເກັບກູ້.

ຂະແໜງການສາທາລະນະສຸກ ເປັນເຈົ້າການ ປະສານສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການພະລັງງານ ແລະ ບໍ່ແຮ່, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງແຜນຈັດສັນ ແລະ ຄຸ້ມຄອງຊັບພະຍາກອນທີ່ເປັນຢາ.

**ມາດຕາ 17 ການກຳນົດຖິ່ນກຳເນີດ ແລະ ເຂດອະນຸລັກພັນ**

ຂະແໜງການສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການພະລັງງານ ແລະ ບໍ່ແຮ່, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກຳນົດຖິ່ນ ກຳເນີດ ແລະ ເຂດອະນຸລັກພັນ ຊັບພະຍາກອນທີ່ເປັນຢາ ຕາມຂໍ້ມູນຕົວຈິງ ທີ່ໄດ້ຈາກການສຳຫຼວດ ດ້ວຍການ ມີສ່ວນຮ່ວມຂອງປະຊາຊົນ ແລະ ສັງຄົມ ເພື່ອອະນຸລັກ, ປົກປັກຮັກສາ, ພັດທະນາ ເປັນແຫຼ່ງທ່ອງທ່ຽວ, ເປັນບ່ອນຂະຫຍາຍພັນ ແລະ ເປັນບ່ອນຮຽນຮູ້, ການສຶກສາຄົ້ນຄວ້າດ້ານວິທະຍາສາດ ກ່ຽວກັບຊັບພະຍາກອນທີ່ເປັນຢາ ພ້ອມທັງອອກລະບຽບການຄຸ້ມຄອງເຂດດັ່ງກ່າວ.

**ມາດຕາ 18 ການສ້າງແຜນ ແລະ ການອະນຸຍາດ ຂຸດຄົ້ນ, ເກັບກູ້**

ຂະແໜງການສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການພະລັງງານ ແລະ ບໍ່ແຮ່, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງແຜນການຂຸດຄົ້ນ, ເກັບກູ້ ຊັບພະຍາກອນທີ່ເປັນຢາ ປະຈຳປີ ຕາມຂໍ້ມູນທີ່ໄດ້ຈາກການສຳຫຼວດ ຫຼື ຄວາມຕ້ອງການນຳໃຊ້ ແລະ ຄວາມອາດສາມາດ ໃນການຂຸດຄົ້ນ, ເກັບກູ້.

ການອະນຸຍາດ ຂຸດຄົ້ນ, ເກັບກູ້ ໃຫ້ປະຕິບັດ ດັ່ງນີ້:

1. ຊັບພະຍາກອນທີ່ເປັນຢາ ບັນຊີ II ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອະນຸຍາດ ຂຸດຄົ້ນ, ເກັບກູ້ ບົນພື້ນຖານ ແຜນການຂຸດຄົ້ນ, ເກັບກູ້ ຂອງກະຊວງສາທາລະນະສຸກ;
2. ຊັບພະຍາກອນທີ່ເປັນຢາ ບັນຊີ III ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເປັນຜູ້ອະນຸຍາດ ຂຸດຄົ້ນ, ເກັບກູ້ ບົນພື້ນຖານ ແຜນການຂຸດຄົ້ນ, ເກັບກູ້ ຂອງພະແນກສາທາລະນະສຸກ.

ສຳລັບ ການຂຸດຄົ້ນ, ເກັບກູ້ ແຮ່ທາດທີ່ເປັນຢາ ໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ເປັນຜູ້ອະນຸຍາດ ບົນພື້ນຖານ ແຜນການຂຸດຄົ້ນ, ເກັບກູ້ ຂອງຂະແໜງການສາທາລະນະສຸກ.

ສຳລັບຊັບພະຍາກອນທີ່ເປັນຢາ ທີ່ປູກ, ລ້ຽງ ບໍ່ຈຳເປັນຕ້ອງມີແຜນການຂຸດຄົ້ນ, ເກັບກູ້, ສາມາດ ຂຸດຄົ້ນ, ເກັບກູ້ ໄດ້ ແຕ່ຕ້ອງແຈ້ງລາຍລະອຽດ ໃຫ້ອົງການຄຸ້ມຄອງວຽກງານຊັບພະຍາກອນທີ່ເປັນຢາ.

ການກຳນົດແຜນການຂຸດຄົ້ນ, ເກັບກູ້ ຕ້ອງໃຫ້ສອດຄ່ອງກັບກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

ສຳລັບການສຳຫຼວດເພື່ອ ຂຸດຄົ້ນ, ເກັບກູ້ ໃຫ້ດຳເນີນໃນເຂດທີ່ລັດອະນຸຍາດ ແລະ ຕ້ອງນຳໃຊ້ເຄື່ອງມື, ເຕັກນິກວິຊາການ ທີ່ຖືກຕ້ອງ ຕາມມາດຕະຖານ ທີ່ກະຊວງສາທາລະນະສຸກ ແລະ ກະຊວງອື່ນທີ່ກ່ຽວຂ້ອງ ກຳນົດ.

### ມາດຕາ 19 ການຂຸດຄົ້ນ, ເກັບກູ້

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນການຂຸດຄົ້ນ, ເກັບກູ້ ຊັບພະຍາກອນທີ່ເປັນຢາ ຕ້ອງສະເໜີແຜນຕໍ່ຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ແລ້ວຂໍອະນຸຍາດ ຂຸດຄົ້ນ, ເກັບກູ້ ນຳຂະແໜງການກະສິກຳ ແລະ ປ່າໄມ້ ຫຼື ຂະແໜງການພະລັງງານ ແລະ ບໍ່ແຮ່ ໂດຍໃຫ້ປະຕິບັດ ດັ່ງນີ້:

1. ຂຸດຄົ້ນ, ເກັບກູ້ ໃນເຂດທີ່ໄດ້ຮັບອະນຸຍາດ;
2. ຂຸດຄົ້ນ, ເກັບກູ້ ຕາມແຜນທີ່ໄດ້ຮັບອະນຸຍາດ;
3. ຂຸດຄົ້ນ, ເກັບກູ້ ຕາມຊະນິດ, ຈຳນວນ ແລະ ປະລິມານ ຊັບພະຍາກອນທີ່ເປັນຢາ ທີ່ໄດ້ຮັບອະນຸຍາດ;
4. ນຳໃຊ້ວິທີການ, ເຕັກນິກທີ່ເໝາະສົມ, ຖືກຕາມລະດູການ ແລະ ວິທີການອື່ນ ທີ່ມີຜົນກະທົບໜ້ອຍທີ່ສຸດຕໍ່ການຂະຫຍາຍພັນ ຂອງຊັບພະຍາກອນທີ່ເປັນຢາ.

### ມາດຕາ 20 ການເກັບຮັກສາ, ການຖອດຣິດ ແລະ ການສະກັດ

ການເກັບຮັກສາ ຊັບພະຍາກອນທີ່ເປັນຢາ ແມ່ນ ການຮັກສາ ເພື່ອຮັບປະກັນຄຸນນະພາບຂອງຊັບພະຍາກອນທີ່ເປັນຢາ ຊຶ່ງສາມາດໃຫ້ທາດຢາ ນຳໄປປຸງແຕ່ງເປັນຜະລິດຕະພັນ ສຳເລັດຮູບ ແລະ ເຄິ່ງສຳເລັດຮູບ.

ການຖອດຣິດ ແລະ ການສະກັດ ຊັບພະຍາກອນທີ່ເປັນຢາ ໄດ້ຮັບການສົ່ງເສີມຈາກລັດ ເພື່ອສ້າງມູນຄ່າເພີ່ມ ແນໃສ່ໃຫ້ໄດ້ຮັບວັດຖຸດິບ ຕາມຈຸດປະສົງ ເພື່ອນຳໄປປຸງແຕ່ງ ແລະ ຜະລິດ ເປັນຜະລິດຕະພັນ ຮັບໃຊ້ພາຍໃນ ແລະ ສົ່ງອອກ.

ໂຮງງານຖອດຣິດ ແລະ ການສະກັດ ຊັບພະຍາກອນທີ່ເປັນຢາ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ, ຮັບປະກັນໃຫ້ໄດ້ ປະລິມານ ແລະ ຄຸນນະພາບ ທີ່ເໝາະສົມ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

ສຳລັບ ການເກັບຮັກສາ, ມາດຕະຖານ ການຖອດຣິດ ແລະ ການສະກັດ ຊັບພະຍາກອນທີ່ເປັນຢາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 21 ການປຸງແຕ່ງ ແລະ ຜະລິດ

ການປຸງແຕ່ງ ແລະ ຜະລິດ ແມ່ນ ການນຳເອົາຊັບພະຍາກອນທີ່ເປັນຢາ ມາປຸງແຕ່ງ ແລະ ຜະລິດ ເປັນຜະລິດຕະພັນ ເພື່ອສ້າງມູນຄ່າເພີ່ມ ຮັບໃຊ້ພາຍໃນ ແລະ ສົ່ງອອກ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ປຸງແຕ່ງ ຫຼື ຜະລິດ ຊັບພະຍາກອນທີ່ເປັນຢາ ຕ້ອງປະຕິບັດຕາມຫຼັກການ ແລະ ມາດຕະຖານ ການປຸງແຕ່ງ ແລະ ຜະລິດ ຂອງກະຊວງສາທາລະນະສຸກ, ກົດໝາຍວ່າດ້ວຍ

ອຸດສາຫະກຳປຸງແຕ່ງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ, ຮັບປະກັນໃຫ້ໄດ້ ປະລິມານ ແລະ ຄຸນນະພາບ ທີ່ເໝາະສົມ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

**ມາດຕາ 22 ການ ຊື້ ຂາຍ ຊັບພະຍາກອນທີ່ເປັນຢາ**

ຊັບພະຍາກອນທີ່ເປັນຢາ ບັນຊີ I ບໍ່ອະນຸຍາດໃຫ້ ຊື້ ຂາຍ ຢ່າງເດັດຂາດ, ເວັ້ນເສຍແຕ່ໃນກໍລະນີການສຶກສາ ຄົ້ນຄວ້າດ້ານວິທະຍາສາດ ແຕ່ຕ້ອງໄດ້ຂໍອະນຸຍາດນຳລັດຖະບານ.

ຊັບພະຍາກອນທີ່ເປັນຢາ ບັນຊີ II ສາມາດ ຊື້ ຂາຍໄດ້ ແຕ່ຕ້ອງໄດ້ຂໍອະນຸຍາດນຳຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ຊັບພະຍາກອນທີ່ເປັນຢາ ບັນຊີ III ສາມາດ ຊື້ ຂາຍ ທົ່ວໄປ, ເວັ້ນເສຍແຕ່ການເກັບຊື້ຊັບພະຍາກອນທີ່ເປັນຢາ ຕ້ອງຂໍອະນຸຍາດນຳຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຕາມກົດໝາຍ.

ສຳລັບ ພືດ, ຕົ້ນໄມ້ ທີ່ເປັນຢາທີ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປູກ, ລ້ຽງນັ້ນ ສາມາດ ຊື້ ຂາຍພາຍໃນໄດ້ ໂດຍບໍ່ຕ້ອງຂໍອະນຸຍາດ.

ການ ຊື້ ຂາຍ ຊັບພະຍາກອນທີ່ເປັນຢາ ທີ່ຢູ່ໃນບັນຊີໄຊເຕັດ ໃຫ້ປະຕິບັດຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 23 ການສ້າງສວນ ຫຼື ຟາມປູກ ພືດ ແລະ ຕົ້ນໄມ້ ທີ່ເປັນຢາ**

ຂະແໜງການສາທາລະນະສຸກ ສ້າງສວນ ຫຼື ຟາມປູກ ພືດ ແລະ ຕົ້ນໄມ້ ທີ່ເປັນຢາ ໂດຍປະສານສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ປະຊາຊົນ ເພື່ອອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ຊັບພະຍາກອນທີ່ເປັນຢາ, ເປັນແຫຼ່ງທ່ອງທ່ຽວ, ບ່ອນຮຽນຮູ້ ແລະ ປູກຈິດສຳນຶກ ໃຫ້ຄົນຮຸ່ນຫຼັງ ໄດ້ສຶກສາຄົ້ນຄວ້າດ້ານວິທະຍາສາດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງສວນ ຫຼື ຟາມປູກ ພືດ ແລະ ຕົ້ນໄມ້ ທີ່ເປັນຢາ ເພື່ອເປັນແຫຼ່ງທ່ອງທ່ຽວ, ສຶກສາຄົ້ນຄວ້າດ້ານວິທະຍາສາດ, ປຸງແຕ່ງ ແລະ ຜະລິດເປັນຜະລິດຕະພັນ ແລະ ອື່ນໆ ໃຫ້ຂໍອະນຸຍາດນຳຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ພືດ ແລະ ຕົ້ນໄມ້ ທີ່ເປັນຢາ ທີ່ຈະປູກໃນສວນ ຫຼື ຟາມ ຕ້ອງໄດ້ຮັບການຂຶ້ນທະບຽນຊະນິດພັນ ແລະ ປະຕິບັດຕາມຫຼັກການການປູກ ແລະ ການເກັບກູ້ທີ່ດີ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ພ້ອມທັງແຈ້ງຕໍ່ຂະແໜງການສາທາລະນະສຸກ ເພື່ອອອກເອກະສານຢັ້ງຢືນການປູກ.

**ມາດຕາ 24 ການສ້າງພິພິທະພັນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດສ້າງພິພິທະພັນຊັບພະຍາກອນທີ່ເປັນຢາ ເພື່ອເປັນສະຖານທີ່ສະສົມ ທ້ອນໂຮມ, ວາງສະແດງ, ອະນຸລັກ ແລະ ປົກປັກຮັກສາຕົວຢ່າງ ຊາກ ຫຼື ຊິ້ນສ່ວນຊັບພະຍາກອນທີ່ເປັນຢາ ໃຫ້ເປັນບ່ອນ ຮຽນຮູ້, ສຶກສາຄົ້ນຄວ້າດ້ານວິທະຍາສາດ ແລະ ທ່ອງທ່ຽວ ແນໃສ່ໂຄສະນາ ປູກຈິດສຳນຶກ, ເຊີດຊູສະຕິ, ສ້າງຄວາມສົນໃຈ, ຮັກ ແລະ ຫວງແຫນຕໍ່ຊັບພະຍາກອນທີ່ເປັນຢາ ໃຫ້ທົ່ວປວງຊົນ ແລະ ສັງຄົມ.

ການສ້າງພິພິທະພັນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພິພິທະພັນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ມາດຕາ 25 ການເຄື່ອນຍ້າຍ ຊັບພະຍາກອນທີ່ເປັນຢາ

ການເຄື່ອນຍ້າຍຊັບພະຍາກອນທີ່ເປັນຢາ ທີ່ເປັນທຸລະກິດ ຕ້ອງມີເອກະສານອະນຸຍາດເຄື່ອນຍ້າຍຈາກຂະແໜງການສາທາລະນະສຸກ ແລະ ມີເອກະສານອື່ນ ຢ່າງຖືກຕ້ອງ ແລະ ຄົບຖ້ວນຈາກຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ.

ການເຄື່ອນຍ້າຍຊັບພະຍາກອນທີ່ເປັນຢາ ບັນຊີ I ພາຍໃນປະເທດ ແມ່ນ ກະຊວງສາທາລະນະສຸກ ເປັນຜູ້ອະນຸຍາດ ໂດຍປະສານສົມທົບກັບກະຊວງອື່ນທີ່ກ່ຽວຂ້ອງ.

ການເຄື່ອນຍ້າຍຊັບພະຍາກອນທີ່ເປັນຢາ ບັນຊີ II ລະຫວ່າງແຂວງຕໍ່ແຂວງ ຕ້ອງຂໍອະນຸຍາດນຳພະແນກສາທາລະນະສຸກຂັ້ນແຂວງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ການເຄື່ອນຍ້າຍຊັບພະຍາກອນທີ່ເປັນຢາ ບັນຊີ II ລະຫວ່າງ ເມືອງຕໍ່ເມືອງ ຕ້ອງຂໍອະນຸຍາດນຳຫ້ອງການສາທາລະນະສຸກຂັ້ນເມືອງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ການເຄື່ອນຍ້າຍຊັບພະຍາກອນທີ່ເປັນຢາ ບັນຊີ III ບໍ່ຈຳເປັນຕ້ອງຂໍອະນຸຍາດ.

ການເຄື່ອນຍ້າຍ ພືດ, ຕົ້ນໄມ້ ທີ່ເປັນຢາ ທີ່ໄດ້ຈາກການປູກ, ລ້ຽງ ສາມາດດຳເນີນໄດ້ ໂດຍບໍ່ຕ້ອງຂໍອະນຸຍາດເຄື່ອນຍ້າຍ ແຕ່ຕ້ອງມີເອກະສານຢັ້ງຢືນການ ປູກ, ລ້ຽງ ຈາກຫ້ອງການສາທາລະນະສຸກຂັ້ນເມືອງ.

ສຳລັບການເຄື່ອນຍ້າຍ ພືດ, ຕົ້ນໄມ້ທີ່ເປັນຢາ ທີ່ມີສານເສບຕິດ, ສານອອກລິດຕໍ່ຈິດປະສາດ, ສັດ ແລະ ແຮ່ທາດ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ມາດຕາ 26 ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ຊັບພະຍາກອນທີ່ເປັນຢາ

ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ຊັບພະຍາກອນທີ່ເປັນຢາ ລະຫວ່າງຕ່າງປະເທດ ໃຫ້ປະຕິບັດ ດັ່ງນີ້:

1. ຊັບພະຍາກອນທີ່ເປັນຢາ ບັນຊີ I ແມ່ນ ລັດຖະບານ ເປັນຜູ້ອະນຸຍາດ ຕາມການສະເໜີຂອງກະຊວງສາທາລະນະສຸກ;
2. ຊັບພະຍາກອນທີ່ເປັນຢາ ບັນຊີ II ແລະ ບັນຊີ III ແມ່ນ ກະຊວງສາທາລະນະສຸກ ເປັນຜູ້ອະນຸຍາດຕາມການສະເໜີຂອງພະແນກສາທາລະນະສຸກຂັ້ນແຂວງ.

ກະຊວງສາທາລະນະສຸກ ເປັນຜູ້ອະນຸມັດ ແຜນການປະຈຳປີ ສຳລັບການ ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ສົ່ງຜ່ານ ຊັບພະຍາກອນທີ່ເປັນຢາ ຕາມການສະເໜີຂອງພະແນກສາທາລະນະສຸກຂັ້ນແຂວງ.

ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ຊັບພະຍາກອນທີ່ເປັນຢາ ຕ້ອງຂໍອະນຸຍາດນຳ ຂະແໜງການສາທາລະນະສຸກ, ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ໂດຍຜ່ານການກວດກາຂອງເຈົ້າໜ້າທີ່ອາຫານ ແລະ ຢາ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ. ສຳລັບການນຳເຂົ້າ ແລະ ສົ່ງຜ່ານ ຕ້ອງມີໃບອະນຸຍາດ ແລະ ໃບຢັ້ງຢືນແຫຼ່ງທີ່ມາ, ໃບຢັ້ງຢືນສຸຂານາໄມພືດ, ສັດ ຈາກປະເທດຕົ້ນທາງ. ໃນກໍລະນີການນຳເຂົ້າຊົ່ວຄາວນັ້ນ ພາຍຫຼັງສິ້ນສຸດຈຸດປະສົງຂອງການນຳໃຊ້ແລ້ວ ຕ້ອງສົ່ງກັບຄືນປະເທດຕົ້ນທາງຕາມເວລາທີ່ໄດ້ກຳນົດໄວ້.

ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ຊັບພະຍາກອນທີ່ເປັນຢາ ທີ່ຢູ່ໃນບັນຊີໄຊເຕັດ ຕ້ອງປະຕິບັດຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 27 ການສ້າງ ແລະ ຄຸ້ມຄອງແຫຼ່ງແນວພັນ ພືດ, ຕົ້ນໄມ້ ທີ່ເປັນຢາ**

ແຫຼ່ງແນວພັນ ພືດ, ຕົ້ນໄມ້ ທີ່ເປັນຢາ ແມ່ນ ພື້ນທີ່ ທີ່ພືດ, ຕົ້ນໄມ້ ທີ່ເປັນຢາ ເກີດຂຶ້ນໃນປ່າທຳມະຊາດ ແລະ ປ່າປູກ ທີ່ລັດກຳນົດຂຶ້ນ ເພື່ອຕອບສະໜອງແນວພັນ ພືດ, ຕົ້ນໄມ້ ທີ່ເປັນຢາ.

ຂະແໜງການສາທາລະນະສຸກ ປະສານສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕາມລະບຽບການໃນການກຳນົດພື້ນທີ່, ການສ້າງ ແລະ ຄຸ້ມຄອງແຫຼ່ງແນວພັນ ພືດ, ຕົ້ນໄມ້ ທີ່ເປັນຢາ.

**ມາດຕາ 28 ລະບົບ ຂໍ້ມູນ ຂ່າວສານ ກ່ຽວກັບຊັບພະຍາກອນທີ່ເປັນຢາ**

ລະບົບ ຂໍ້ມູນ ຂ່າວສານ ກ່ຽວກັບຊັບພະຍາກອນທີ່ເປັນຢາ ແມ່ນ ບ່ອນເກັບກຳ, ສັງລວມ, ເກັບຮັກສາ, ວິເຄາະ, ວິໄຈ ແລະ ສະໜອງ ຂໍ້ມູນ ຂ່າວສານ ໃນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ.

ກະຊວງສາທາລະນະສຸກ ສ້າງ, ປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ ຂໍ້ມູນ ຂ່າວສານ ກ່ຽວກັບຊັບພະຍາກອນທີ່ເປັນຢາ ລວມທັງການສະໜອງ ແລະ ແລກປ່ຽນ ຂໍ້ມູນ ຂ່າວສານ ດັ່ງກ່າວ ໂດຍປະສານສົມທົບກັບກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ພະແນກສາທາລະນະສຸກຂັ້ນແຂວງ, ຫ້ອງການສາທາລະນະສຸກຂັ້ນເມືອງ ປັບປຸງລະບົບ ຂໍ້ມູນ ຂ່າວສານ ກ່ຽວກັບຊັບພະຍາກອນທີ່ເປັນຢາ ໃຫ້ເຊື່ອມຕໍ່ກັບລະບົບ ຂໍ້ມູນ ຂ່າວສານ ຂອງກະຊວງສາທາລະນະສຸກ ລວມທັງສະໜອງ ແລະ ແລກປ່ຽນ ຂໍ້ມູນ ຂ່າວສານ ກ່ຽວກັບຊັບພະຍາກອນທີ່ເປັນຢາ ຕາມຄວາມຮັບຜິດຊອບຂອງຕົນ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນໃນລະບົບ ຂໍ້ມູນ ຂ່າວສານ ກ່ຽວກັບຊັບພະຍາກອນທີ່ເປັນຢາ ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ຕາມການອະນຸຍາດຂອງຂະແໜງການສາທາລະນະສຸກ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 2
## ການປົກປັກຮັກສາຊັບພະຍາກອນທີ່ເປັນຢາ

**ມາດຕາ 29 ການປົກປັກຮັກສາຊັບພະຍາກອນທີ່ເປັນຢາ**

ການປົກປັກຮັກສາຊັບພະຍາກອນທີ່ເປັນຢາ ແມ່ນ ການອະນຸລັກ, ປັບປຸງ, ປ້ອງກັນ ແລະ ການຄວບຄຸມບໍ່ໃຫ້ເກີດຄວາມເສຍຫາຍຕໍ່ຊັບພະຍາກອນທີ່ເປັນຢາ ຊຶ່ງເກີດຈາກ ທຳມະຊາດ ຫຼື ມະນຸດ ສ້າງຂຶ້ນ ເພື່ອໃຫ້ມີການຂະຫຍາຍຕົວ ແລະ ມີຄວາມອຸດົມສົມບູນ.

ການປົກປັກຮັກສາຊັບພະຍາກອນທີ່ເປັນຢາ ປະກອບດ້ວຍກິດຈະການ ດັ່ງນີ້:

1. ການກຳນົດເຂດປົກປັກຮັກສາ;
2. ການກັນ ແລະ ການຄວບຄຸມພະຍາດໄມ້, ບົ້ງ, ແມງ ແລະ ສັດຕູ ພືດ, ຕົ້ນໄມ້ ທີ່ເປັນຢາ;
3. ການສຶກສາຄົ້ນຄວ້າດ້ານວິທະຍາສາດ;
4. ການປູກຈິດສຳນຶກ;
5. ກິດຈະການອື່ນ.

**ມາດຕາ 30 ການກຳນົດເຂດປົກປັກຮັກສາ**

ຂະແໜງການສາທາລະນະສຸກ ປະສານສົມທົບກັບ ຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກຳນົດ ແຫຼ່ງແນວພັນພືດ, ຕົ້ນໄມ້, ຖິ່ນທີ່ຢູ່ອາໄສ, ເຂດອະນຸລັກຊັບພະຍາກອນທີ່ເປັນຢາ ຕາມຂໍ້ມູນຕົວຈິງທີ່ໄດ້ຈາກການສຳຫຼວດ ດ້ວຍການມີສ່ວນຮ່ວມຂອງປະຊາຊົນ ພ້ອມທັງອອກລະບຽບການ ໃນການຄຸ້ມຄອງເຂດປົກປັກຮັກສາຊັບພະຍາກອນທີ່ເປັນຢາ ຕາມຄວາມຮັບຜິດຊອບຂອງຕົນ.

**ມາດຕາ 31 ການກັນ ແລະ ການຄວບຄຸມ ພະຍາດໄມ້, ບົ້ງ, ແມງ ແລະ ສັດຕູ ພືດ, ຕົ້ນໄມ້ ທີ່ເປັນຢາ**

ການກັນ ແລະ ການຄວບຄຸມ ພະຍາດໄມ້, ບົ້ງ, ແມງ ແລະ ສັດຕູ ພືດ, ຕົ້ນໄມ້ ທີ່ເປັນຢາ ແມ່ນ ການເຝົ້າລະວັງ, ຕິດຕາມ ການເກີດ, ລະບາດ ພະຍາດໄມ້, ບົ້ງ, ແມງ ແລະ ສັດຕູ ພືດ, ຕົ້ນໄມ້ ທີ່ເປັນຢາ ທີ່ຈະສ້າງຄວາມເສຍຫາຍແກ່ ພືດ, ຕົ້ນໄມ້ ທີ່ເປັນຢາ ເພື່ອນຳໃຊ້ວິທີການ ແລະ ມາດຕະການ ກັນ ແລະ ຄວບຄຸມໃຫ້ມີປະສິດທິພາບ ແລະ ທັນເວລາ.

ສຳລັບ ການກັນ ແລະ ການຄວບຄຸມ ພະຍາດໄມ້, ບົ້ງ, ແມງ ແລະ ສັດຕູ ພືດ, ຕົ້ນໄມ້ ທີ່ເປັນຢາ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 32 ການສຶກສາຄົ້ນຄວ້າດ້ານວິທະຍາສາດ**

ການສຶກສາຄົ້ນຄວ້າດ້ານວິທະຍາສາດ ແມ່ນ ຂະບວນການ ເກັບ, ລວບລວມ, ວິເຄາະ, ວິໄຈ, ຄົ້ນຫາຂໍ້ມູນ, ສ້າງຄວາມຮັບຮູ້, ຄວາມເຂົ້າໃຈ ກ່ຽວກັບຊັບພະຍາກອນທີ່ເປັນຢາ ເພື່ອມາໝູນໃຊ້ເຂົ້າໃນການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ຊັບພະຍາກອນທີ່ເປັນຢາ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ແລະ ຖືກຕ້ອງ ຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

ການນຳເອົາຕົວຢ່າງ ຂອງຊັບພະຍາກອນທີ່ເປັນຢາ ເປັນຕົ້ນ ຊາກ, ຊິ້ນສ່ວນ ເພື່ອໄປສຶກສາຄົ້ນຄວ້າດ້ານວິທະຍາສາດ ຢູ່ຕ່າງປະເທດ ຕ້ອງຂໍອະນຸຍາດນຳລັດຖະບານ ຫຼື ກະຊວງສາທາລະນະສຸກ ແລະ ກະຊວງອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້. ພາຍຫຼັງສຳເລັດການສຶກສາຄົ້ນຄວ້າດ້ານວິທະຍາສາດແລ້ວ ຕ້ອງສົ່ງຜົນການຄົ້ນຄວ້າ ໃຫ້ກະຊວງສາທາລະນະສຸກ ແລະ ກະຊວງອື່ນທີ່ກ່ຽວຂ້ອງ ພາຍໃນເວລາ ສິບຫ້າວັນ.

**ມາດຕາ 33 ການປູກຈິດສຳນຶກ**

ການປູກຈິດສຳນຶກ ແມ່ນ ການໂຄສະນາ ເຜີຍແຜ່ ກ່ຽວກັບຄວາມໝາຍ ແລະ ຄວາມສຳຄັນຂອງວຽກງານຊັບພະຍາກອນທີ່ເປັນຢາ ໂດຍຜ່ານສື່ມວນຊົນ, ການຮຽນ-ການສອນ, ຊຸກຍູ້ ແລະ ສົ່ງເສີມການສ້າງກິດຈະກຳຕ່າງໆ ເພື່ອປຸກລະດົມ ທົ່ວປວງຊົນ ເຊີດຊູສະຕິຮັກ, ຫວງແຫນ, ຖະໜອມ ຊັບພະຍາກອນທີ່ເປັນຢາ, ປ່ຽນແປງພຶດຕິກຳໃນການນຳໃຊ້ຊັບພະຍາກອນທີ່ເປັນຢາ ໃຫ້ຖືກຕ້ອງ ແລະ ເປັນເຈົ້າການເຂົ້າຮ່ວມໃນການ ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ຊັບພະຍາກອນທີ່ເປັນຢາ ແບບຍືນຍົງ.

ຂະແໜງການສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການປູກຈິດສຳນຶກ.

## ໝວດທີ 3
## ການພັດທະນາຊັບພະຍາກອນທີ່ເປັນຢາ

### ມາດຕາ 34 ການພັດທະນາຊັບພະຍາກອນທີ່ເປັນຢາ

ການພັດທະນາຊັບພະຍາກອນທີ່ເປັນຢາ ແມ່ນ ການ ຟື້ນຟູ, ຂະຫຍາຍພັນ, ປູກ ແລະ ການລ້ຽງ ດ້ວຍການນໍາໃຊ້ ເຕັກນິກ, ວິຊາການ, ວິທະຍາສາດ ທີ່ເໝາະສົມ ຢ່າງຕໍ່ເນື່ອງ ເພື່ອນໍາໃຊ້ຊັບພະຍາກອນທີ່ເປັນຢາ ບໍ່ໃຫ້ ບົກແຫ້ງ, ສູນພັນ ແລະ ໃຫ້ມີຄວາມສົມດຸນທາງທໍາມະຊາດ, ເພີ່ມຈໍານວນຊັບພະຍາກອນທີ່ເປັນຢາ, ເປັນວັດຖຸດິບທີ່ມີຄຸນນະພາບ, ປອດໄພ ແລະ ຕອບສະໜອງໃຫ້ແກ່ການຜະລິດເປັນຜະລິດຕະພັນ ຮັບໃຊ້ສັງຄົມ.

### ມາດຕາ 35 ການຟື້ນຟູ ພືດ, ຕົ້ນໄມ້ ທີ່ເປັນຢາ

ການຟື້ນຟູ ພືດ, ຕົ້ນໄມ້ ທີ່ເປັນຢາ ແມ່ນ ການປະຕິບັດທາງດ້ານວິຊາການ ເພື່ອເຮັດໃຫ້ ພືດ, ຕົ້ນໄມ້ທີ່ເປັນຢາທີ່ມີສະພາບຊຸດໂຊມ, ຫຼຸດລົງ, ກະຈາຍບໍ່ສະໝໍ່າສະເໝີ, ມີຄວາມສ່ຽງໃນການສູນພັນ ຫຼື ໃກ້ສູນພັນກັບຄືນມາສູ່ຄວາມອຸດົມສົມບູນ ແລະ ຍືນຍົງ.

ການຟື້ນຟູ ພືດ, ຕົ້ນໄມ້ ທີ່ເປັນຢາ ມີ ສອງແບບ ຄື ແບບທໍາມະຊາດ ແລະ ແບບປູກເສີມ ໂດຍໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ສໍາຫຼວດ ສະພາບການ ສືບພັນ, ເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງ ພືດ, ຕົ້ນໄມ້ ທີ່ເປັນຢາ ໃນເນື້ອທີ່ຈະດໍາເນີນການຟື້ນຟູ;
2. ກໍານົດຂອບເຂດ ແລະ ປັກຫຼັກໝາຍ;
3. ກໍານົດຊະນິດ ພືດ, ຕົ້ນໄມ້ ທີ່ເປັນຢາ ທີ່ແທດເໝາະກັບລະບົບນິເວດຂອງພື້ນທີ່ ທີ່ໄດ້ສໍາຫຼວດ;
4. ສ້າງເປັນແຜນການ ຫຼື ໂຄງການຟື້ນຟູ ພືດ, ຕົ້ນໄມ້ ທີ່ເປັນຢາ ຕິດພັນກັບກິດຈະກໍາສິ່ງເສີມການສ້າງລາຍຮັບໃຫ້ແກ່ປະຊາຊົນ;
5. ຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ປົກປັກຮັກສາ ຢ່າງເຂັ້ມງວດ;
6. ຂຶ້ນທະບຽນເຂດຟື້ນຟູ ພືດ, ຕົ້ນໄມ້ ທີ່ເປັນຢາ ຕາມລະບຽບການ.

### ມາດຕາ 36 ແຜນການຟື້ນຟູ ພືດ, ຕົ້ນໄມ້ ທີ່ເປັນຢາ

ຂະແໜງການສາທາລະນະສຸກ ປະສານສົມທົບກັບຂະແໜງການກະສິກໍາ ແລະ ປ່າໄມ້, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍການມີສ່ວນຮ່ວມຂອງປະຊາຊົນ ແລະ ຊຸມຊົນ ຂຶ້ນແຜນການຟື້ນຟູ ພືດ, ຕົ້ນໄມ້ ທີ່ເປັນຢາ ໃນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຊຶ່ງໃຫ້ລະບຸແຈ້ງ ກ່ຽວກັບແນວພັນທີ່ຈະປູກ, ສະຖານທີ່, ເນື້ອທີ່ ແລະ ທຶນ ລວມທັງຜູ້ດໍາເນີນການ ຟື້ນຟູ ແລະ ປົກປັກຮັກສາ.

### ມາດຕາ 37 ການກໍານົດເຂດຟື້ນຟູ ແລະ ການເລືອກແນວພັນ ພືດ, ຕົ້ນໄມ້ ທີ່ເປັນຢາ

ຂະແໜງການສາທາລະນະສຸກ ປະສານສົມທົບກັບຂະແໜງການກະສິກໍາ ແລະ ປ່າໄມ້, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍການມີສ່ວນຮ່ວມຂອງປະຊາຊົນໃນທ້ອງຖິ່ນນັ້ນ ສໍາຫຼວດ ແລະ ກໍານົດເຂດຟື້ນຟູ ພືດ, ຕົ້ນໄມ້ ທີ່ເປັນຢາ.

ການກໍານົດ ແລະ ເລືອກແນວພັນ ພືດ, ຕົ້ນໄມ້ ທີ່ເປັນຢາ ທີ່ຈະປູກໃນເຂດຟື້ນຟູ ໃຫ້ອີງໃສ່ເງື່ອນໄຂຂອງດິນ, ສະພາບອາກາດ ແລະ ເງື່ອນໄຂອື່ນ ທີ່ເໝາະສົມ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 38 ການສົ່ງເສີມການຟື້ນຟູ ພືດ, ຕົ້ນໄມ້ ທີ່ເປັນຢາ**

ລັດ ສົ່ງເສີມ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ແລະ ການຈັດຕັ້ງ ດໍາເນີນການຟື້ນຟູ ພືດ, ຕົ້ນໄມ້ ທີ່ເປັນຢາ ໃນເຂດທີ່ລັດຈັດສັນໃຫ້ ໂດຍຮັບຮູ້ສິດໃນການປົກປັກຮັກສາ, ສິດໄດ້ຮັບຜົນປະໂຫຍດ ຈາກການນໍາໃຊ້ ພືດ, ຕົ້ນໄມ້ ທີ່ເປັນຢາ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 39 ການຂະຫຍາຍພັນ ພືດ, ຕົ້ນໄມ້ ແລະ ສັດ ທີ່ເປັນຢາ**

ການຂະຫຍາຍພັນ ພືດ, ຕົ້ນໄມ້ ທີ່ເປັນຢາ ແມ່ນ ການນໍາເອົາ ຕົ້ນ, ລໍາ, ເປືອກ, ເຄືອ, ຮາກ, ຫົວ, ໜໍ່, ກິ່ງ, ກ້ານ, ຕາ, ຍອດ, ໃບ, ດອກ, ໝາກ, ເມັດ ຫຼື ແກ່ນ, ກາຝາກພືດ, ເຊື້ອເຫັດ, ສະປໍ, ເນື້ອເຍື່ອ ແລະ ອື່ນໆຂອງພັນ ພືດ, ຕົ້ນໄມ້ ທີ່ເປັນຢາຊະນິດຕ່າງໆ ທີ່ເກີດຂຶ້ນຕາມທໍາມະຊາດ ຫຼື ປູກ, ລ້ຽງ ມາຂະຫຍາຍພັນ ເພື່ອເພີ່ມປະລິມານ ແລະ ປ້ອງກັນການສູນພັນຂອງພັນ ພືດ, ຕົ້ນໄມ້ ທີ່ເປັນຢາ.

ການຂະຫຍາຍພັນສັດທີ່ເປັນຢາ ແມ່ນ ການນໍາເອົາສັດທີ່ເປັນຢາມາປະສົມພັນແບບ ທໍາມະຊາດ, ເຄິ່ງທໍາມະຊາດ, ການປະສົມພັນທຽມ ຫຼື ການນໍາໃຊ້ເຕັກນິກວິຊາການອື່ນ ເພື່ອເພີ່ມຈໍານວນສັດທີ່ເປັນຢາ ແລະ ມີຄວາມຫຼາກຫຼາຍທາງດ້ານພັນທຸກໍາ ແລະ ປ້ອງກັນການສູນພັນຂອງສັດທີ່ເປັນຢາ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂະຫຍາຍພັນ ພືດ, ຕົ້ນໄມ້ ແລະ ສັດ ທີ່ເປັນຢາ ຕ້ອງປະຕິບັດ ຕາມວິທີການ, ມາດຕະຖານເຕັກນິກ ແລະ ລະບຽບການ.

ຂະແໜງການສາທາລະນະສຸກ ປະສານສົມທົບກັບຂະແໜງການກະສິກໍາ ແລະ ປ່າໄມ້ ກໍານົດວິທີການ, ມາດຕະຖານເຕັກນິກ ແລະ ລະບຽບການ ກ່ຽວກັບການຂະຫຍາຍພັນ ພືດ, ຕົ້ນໄມ້ ແລະ ສັດ ທີ່ເປັນຢາ.

**ມາດຕາ 40 ການປູກ ພືດ, ຕົ້ນໄມ້ ທີ່ເປັນຢາ**

ການປູກ ພືດ, ຕົ້ນໄມ້ ທີ່ເປັນຢາ ສາມາດດໍາເນີນໃນເຂດທີ່ລັດຈັດສັນໃຫ້ ຫຼື ເຂດທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບສິດນໍາໃຊ້ ຕາມກົດໝາຍ ຊຶ່ງຕ້ອງໄດ້ຮັບການຄຸ້ມຄອງ ຕາມລະບຽບການ ເປັນຕົ້ນ ການຄັດເລືອກແນວພັນ, ການເກັບແກ່ນພັນ, ແນວພັນ ລວມທັງການນໍາເຂົ້າແນວພັນ ພືດ, ຕົ້ນໄມ້ ທີ່ເປັນຢາ, ການປົກປັກຮັກສາ ແລະ ຂຶ້ນທະບຽນການປູກ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງປູກ ພືດ, ຕົ້ນໄມ້ ທີ່ເປັນຢາ ຕ້ອງປະຕິບັດຕາມຫຼັກການ ການປູກ ແລະ ການເກັບກູ້ທີ່ດີ ທີ່ກະຊວງສາທາລະນະສຸກ ແລະ ກະຊວງອື່ນທີ່ກ່ຽວຂ້ອງ ກໍານົດ.

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນ ໃນການປູກພືດ, ຕົ້ນໄມ້ ທີ່ເປັນຢາ ດ້ວຍການໃຫ້ນະໂຍບາຍ ຍົກເວັ້ນອາກອນທີ່ດິນ ແລະ ນະໂຍບາຍອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 41 ການລ້ຽງສັດທີ່ເປັນຢາ**

ການລ້ຽງສັດທີ່ເປັນຢາ ແມ່ນ ການນໍາເອົາສັດມາລ້ຽງໃນສະຖານທີ່ ທີ່ເໝາະສົມ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກ ໂດຍມີການຄຸ້ມຄອງ, ການປົກປັກຮັກສາ, ການນໍາໃຊ້ແນວພັນ ແລະ ການບໍລິຫານຈັດການ ເພື່ອເຮັດໃຫ້ສັດທີ່ເປັນຢາ ມີສຸຂະພາບແຂງແຮງ, ຈະເລີນເຕີບໂຕ, ມີຜົນຜະລິດຫຼາຍຂຶ້ນ ແລະ ບໍ່ມີຜົນກະທົບທາງລົບຕໍ່ສິ່ງແວດລ້ອມ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງລ້ຽງສັດທີ່ເປັນຢາ ຕ້ອງປະຕິບັດຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

ຂະແໜງການສາທາລະນະສຸກ ປະສານສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້ ກຳນົດ ວິທີການ, ມາດຕະຖານເຕັກນິກ ແລະ ລະບຽບການ ກ່ຽວກັບການລ້ຽງສັດທີ່ເປັນຢາ.

## ໝວດທີ 4
## ການນຳໃຊ້ຊັບພະຍາກອນທີ່ເປັນຢາ

### ມາດຕາ 42 ປະເພດການນຳໃຊ້ຊັບພະຍາກອນທີ່ເປັນຢາ

ປະເພດການນຳໃຊ້ຊັບພະຍາກອນທີ່ເປັນຢາ ມີ ດັ່ງນີ້:

1. ການນຳໃຊ້ຊັບພະຍາກອນທີ່ເປັນຢາ ເພື່ອສາທາລະນະປະໂຫຍດ;
2. ການນຳໃຊ້ຊັບພະຍາກອນທີ່ເປັນຢາ ເພື່ອຄອບຄົວ;
3. ການນຳໃຊ້ຊັບພະຍາກອນທີ່ເປັນຢາ ຕາມປະເພນີ;
4. ການນຳໃຊ້ຊັບພະຍາກອນທີ່ເປັນຢາ ເພື່ອທຸລະກິດ.

ການນຳໃຊ້ຊັບພະຍາກອນທີ່ເປັນຢາ ທຸກປະເພດ ຕ້ອງຮັບປະກັນຄວາມຍືນຍົງ, ຄວາມສົມດຸນຂອງລະບົບນິເວດ ແລະ ບໍ່ໃຫ້ມີຜົນກະທົບທາງລົບຕໍ່ສິ່ງແວດລ້ອມ.

ການນຳໃຊ້ຊັບພະຍາກອນທີ່ເປັນຢາ ທຸກປະເພດ ທີ່ໄດ້ຈາກການ ປູກ, ລ້ຽງ ສາມາດ ເກັບກູ້ ແລະ ນຳໃຊ້ໄດ້ ໂດຍບໍ່ຕ້ອງຂໍອະນຸຍາດ ແຕ່ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 43 ການນຳໃຊ້ຊັບພະຍາກອນທີ່ເປັນຢາ ເພື່ອສາທາລະນະປະໂຫຍດ

ການນຳໃຊ້ຊັບພະຍາກອນທີ່ເປັນຢາ ເພື່ອສາທາລະນະປະໂຫຍດ ແມ່ນ ການນຳເອົາຊັບພະຍາກອນທີ່ເປັນຢາ ມານຳໃຊ້ ເພື່ອຜົນປະໂຫຍດລວມ ເປັນຕົ້ນ ໃຊ້ປິ່ນປົວ ແລະ ຮັກສາສຸຂະພາບ, ສຶກສາຄົ້ນຄວ້າດ້ານວິທະຍາສາດ, ອະນຸລັກ, ເປັນແຫຼ່ງທ່ອງທ່ຽວ.

### ມາດຕາ 44 ການນຳໃຊ້ຊັບພະຍາກອນທີ່ເປັນຢາ ເພື່ອຄອບຄົວ

ການນຳໃຊ້ຊັບພະຍາກອນທີ່ເປັນຢາ ເພື່ອຄອບຄົວ ແມ່ນ ການນຳເອົາຊັບພະຍາກອນທີ່ເປັນຢາ ມານຳໃຊ້ ເພື່ອບໍລິໂພກ, ຊົມໃຊ້ໃນຊີວິດປະຈຳວັນ, ປິ່ນປົວ ແລະ ຮັກສາສຸຂະພາບ ຊຶ່ງບໍ່ຈຳເປັນຂໍອະນຸຍາດ.

### ມາດຕາ 45 ການນຳໃຊ້ຊັບພະຍາກອນທີ່ເປັນຢາ ຕາມປະເພນີ

ການນຳໃຊ້ຊັບພະຍາກອນທີ່ເປັນຢາ ຕາມປະເພນີ ແມ່ນ ການນຳເອົາຊັບພະຍາກອນທີ່ເປັນຢາ ມານຳໃຊ້ ເພື່ອຄວາມຈຳເປັນທາງດ້ານວັດທະນະທຳ ຫຼື ຄວາມເຊື່ອຖື ທີ່ເຄີຍປະຕິບັດກັນມາ ໂດຍສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 46 ການນຳໃຊ້ຊັບພະຍາກອນທີ່ເປັນຢາ ເພື່ອທຸລະກິດ

ການນຳໃຊ້ຊັບພະຍາກອນທີ່ເປັນຢາ ເພື່ອທຸລະກິດ ແມ່ນ ການນຳເອົາຊັບພະຍາກອນທີ່ເປັນຢາ ມານຳໃຊ້ ເພື່ອດຳເນີນທຸລະກິດ ເປັນຕົ້ນ ການສ້າງສວນ, ການສ້າງຟາມ, ການປຸງແຕ່ງ, ການຜະລິດ, ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ, ການສົ່ງຜ່ານ.

ການນໍາໃຊ້ຊັບພະຍາກອນທີ່ເປັນຢາ ເພື່ອທຸລະກິດ ຕ້ອງປະຕິບັດໃຫ້ສອດຄ່ອງກັບກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ພາກທີ IV
## ທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ

### ມາດຕາ 47 ການດໍາເນີນທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ດໍາເນີນທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ ທີ່ຢູ່ໃນບັນຊີຄວບຄຸມ ຕ້ອງຍື່ນຄໍາຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນໍາຂະແໜງການອຸດສາຫະກໍາ ແລະ ການຄ້າ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ຂໍອະນຸຍາດລົງທຶນ ນໍາກະຊວງແຜນການ ແລະ ການລົງທຶນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ. ພາຍຫຼັງໄດ້ຮັບທະບຽນວິສາຫະກິດ ແລະ ໃບອະນຸຍາດລົງທຶນແລ້ວ ໃຫ້ຂໍອະນຸຍາດດໍາເນີນທຸລະກິດ ນໍາກະຊວງສາທາລະນະສຸກ.

ສໍາລັບກິດຈະການທີ່ບໍ່ຢູ່ໃນບັນຊີຄວບຄຸມ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນໍາຂະແໜງການອຸດສາຫະກໍາ ແລະ ການຄ້າ ແລະ ຂໍອະນຸຍາດດໍາເນີນທຸລະກິດ ນໍາຂະແໜງການສາທາລະນະສຸກ ຕາມກົດໝາຍ.

ການດໍາເນີນທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ ທີ່ຢູ່ໃນບັນຊີໄຊເຕັດ ໃຫ້ປະຕິບັດຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

### ມາດຕາ 48 ປະເພດທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ

ປະເພດທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ ມີ ດັ່ງນີ້:

1. ການປູກ, ລ້ຽງ;
2. ການຂຸດຄົ້ນ, ເກັບກູ້;
3. ການຖອດຮິດ ແລະ ການສະກັດ;
4. ການປຸງແຕ່ງ ແລະ ຜະລິດ;
5. ການນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ;
6. ການເກັບຊື້;
7. ການຈໍາໜ່າຍ;
8. ທຸລະກິດອື່ນ ກ່ຽວກັບຊັບພະຍາກອນທີ່ເປັນຢາ.

### ມາດຕາ 49 ເງື່ອນໄຂການດໍາເນີນທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ດໍາເນີນທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ ມີເງື່ອນໄຂ ດັ່ງນີ້:

1. ມີໃບທະບຽນວິສາຫະກິດ ແລະ/ຫຼື ໃບອະນຸຍາດລົງທຶນ;
2. ມີເນື້ອທີ່, ທຶນ, ອຸປະກອນ, ເຄື່ອງມື ແລະ ພາຫະນະຮັບໃຊ້ຢ່າງເໝາະສົມ;
3. ມີບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດໍາເນີນທຸລະກິດ;
4. ມີນັກວິຊາການທີ່ມີຄວາມຮູ້ດ້ານຊັບພະຍາກອນທີ່ເປັນຢາ;

5. ມີເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດ.

**ມາດຕາ 50 ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ມີ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ ຕາມແບບພິມ ທີ່ກະຊວງສາທາລະນະສຸກ ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ ແລະ/ຫຼື ໃບອະນຸຍາດລົງທຶນ;
3. ບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດຳເນີນທຸລະກິດ;
4. ເອກະສານອື່ນ ຕາມແຕ່ລະປະເພດທຸລະກິດ.

**ມາດຕາ 51 ການພິຈາລະນາການຂໍອະນຸຍາດດຳເນີນທຸລະກິດ**

ຂະແໜງການສາທາລະນະສຸກ ຕ້ອງພິຈາລະນາການຂໍອະນຸຍາດດຳເນີນທຸລະກິດ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍ ແລະ ເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

ໃນກໍລະນີບໍ່ອະນຸຍາດ ໃຫ້ດຳເນີນທຸລະກິດນັ້ນ ກໍໃຫ້ແຈ້ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນໃຫ້ຜູ້ຮ້ອງຂໍ ພາຍໃນກຳນົດເວລາດັ່ງກ່າວ.

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ ມີອາຍຸການ ຕາມແຕ່ລະປະເພດທຸລະກິດ ແລະ ສາມາດຕໍ່ໄດ້ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 52 ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດກ່ຽວກັບຊັບພະຍາກອນທີ່ເປັນຢາ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນ ໃຫ້ຖືກຕ້ອງຕາມ ການອະນຸຍາດ, ມາດຕະຖານເຕັກນິກ ແລະ ກົດໝາຍ;
2. ໄດ້ຮັບ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ;
3. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບການລະເມີດກົດໝາຍ ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ປະກອບສ່ວນ ທາງດ້ານທຶນ ຫຼື ແຮງງານ ເຂົ້າໃນການພັດທະນາວຽກງານຊັບພະຍາກອນທີ່ເປັນຢາ;
5. ໃຫ້ການຮ່ວມມື, ສະໜອງ ຂໍ້ມູນ ຂ່າວສານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;
6. ຮຽກຄືນ ຜະລິດຕະພັນຊັບພະຍາກອນທີ່ເປັນຢາ ທີ່ບໍ່ໄດ້ມາດຕະຖານ ເພື່ອແກ້ໄຂ ຫຼື ປັບປຸງ;
7. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກການດຳເນີນທຸລະກິດຂອງຕົນ;
8. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ;
9. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 53 ການໂຈະການດຳເນີນທຸລະກິດ**

ການດຳເນີນທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ມີການສະເໜີຂອງຜູ້ດຳເນີນທຸລະກິດ;

2. ດໍາເນີນທຸລະກິດ ບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;

3. ດໍາເນີນທຸລະກິດ ບໍ່ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ.

ໃນກໍລະນີຜູ້ດໍາເນີນທຸລະກິດ ບໍ່ແກ້ໄຂ ຫຼື ບໍ່ປັບປຸງ ຕາມການແຈ້ງເຕືອນແລ້ວ ໃຫ້ຂະແໜງການສາທາລະນະສຸກ ສັ່ງໂຈະການດໍາເນີນທຸລະກິດ.

**ມາດຕາ 54 ການຖອນໃບອະນຸຍາດດໍາເນີນທຸລະກິດ**

ໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ ຈະຖືກຖອນໃນກໍລະນີ ດັ່ງນີ້:

1. ມີການສະເໜີຂອງຜູ້ດໍາເນີນທຸລະກິດ ໂດຍມີເຫດຜົນພຽງພໍ;
2. ບໍ່ແກ້ໄຂ ຫຼື ບໍ່ປັບປຸງ ຕາມຄໍາສັ່ງໂຈະ;
3. ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບຊັບພະຍາກອນທີ່ເປັນຢາ ແລະ ສ້າງຜົນເສຍຫາຍຢ່າງຫຼວງຫຼາຍ ຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
4. ມີຄໍາຕັດສິນຂອງສານໃຫ້ລົ້ມລະລາຍ;
5. ບໍ່ດໍາເນີນທຸລະກິດພາຍຫຼັງໄດ້ຮັບອະນຸຍາດ ເປັນເວລາ ໜຶ່ງປີ.

ພາຍຫຼັງໄດ້ຖອນໃບອະນຸຍາດດໍາເນີນທຸລະກິດແລ້ວ ຂະແໜງການສາທາລະນະສຸກ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກໍາ ແລະ ການຄ້າ ທີ່ກ່ຽວຂ້ອງ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນຖອນໃບອະນຸຍາດດໍາເນີນທຸລະກິດ ເປັນຕົ້ນໄປ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 55 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງ, ໃຊ້ຄວາມຮຸນແຮງ, ບັງຄັບ ນາບຂູ່ ແລະ ໝິ່ນປະໝາດຕໍ່ການເຄື່ອນໄຫວວຽກງານ ຫຼື ການປະຕິບັດໜ້າທີ່ຂອງການຈັດຕັ້ງ, ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
2. ໃຫ້ ຫຼື ຮັບ, ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນ ໃຫ້ແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ໂຄສະນາ ເຜີຍແຜ່ ຫຼື ສະໜອງຂໍ້ມູນ ໃນທາງບິດເບືອນ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ;
4. ຊື້ ຂາຍ, ຂຸດຄົ້ນ, ເກັບກູ້, ນໍາເຂົ້າ, ສົ່ງອອກ, ສົ່ງອອກຄືນ, ສົ່ງຜ່ານ ຫຼື ເຄື່ອນຍ້າຍ ແລະ ທໍາລາຍຊັບພະຍາກອນທີ່ເປັນຢາ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
5. ບຸກລຸກທໍາລາຍ ຖິ່ນກໍາເນີດ ແລະ ເຂດອະນຸລັກຊັບພະຍາກອນທີ່ເປັນຢາ ໂດຍທາງກົງ ຫຼື ທາງອ້ອມ;
6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 56 ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດ**

ຫ້າມຜູ້ດໍາເນີນທຸລະກິດ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນທຸລະກິດ ບໍ່ຖືກຕ້ອງຕາມກົດໝາຍ ຫຼື ຕາມການອະນຸຍາດ;

2. ໂອນ ຫຼື ໃຫ້ເຊົ່າ ໃບອະນຸຍາດດຳເນີນທຸລະກິດ;

3. ບັງຄັບ, ນາບຂູ່ ແລະ ໃຊ້ວາຈາທີ່ບໍ່ເໝາະສົມຕໍ່ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

4. ໃຫ້ສິນບົນ ແກ່ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

5. ໂຄສະນາ ເຜີຍແຜ່ ຫຼື ສະໜອງຂໍ້ມູນ ກ່ຽວກັບຊັບພະຍາກອນທີ່ເປັນຢາ, ຜະລິດຕະພັນຢາພື້ນເມືອງ ຫຼື ຜະລິດຕະພັນເສີມສຸຂະພາບ ເກີນຄວາມເປັນຈິງ ຫຼື ບໍ່ຖືກຕ້ອງ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 57 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກຂອງຕົນ;

2. ກົດໜ່ວງ ຖ່ວງດຶງ, ເມີນເສີຍ, ເປີດເຜີຍຄວາມລັບ, ປອມແປງເອກະສານ, ນຳໃຊ້ເອກະສານປອມ, ທຳລາຍເອກະສານ ຫຼື ອອກເອກະສານໂດຍບໍ່ຖືກຕ້ອງ;

3. ຂໍເອົາ, ຮຽກເອົາ, ທວງເອົາ ຫຼື ຮັບເອົາສິນບົນ;

4. ເປັນທີ່ປຶກສາ, ເປັນພະນັກງານ ແລະ ເຂົ້າຮ່ວມໃນການດຳເນີນທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ;

5. ປະຕິບັດໜ້າທີ່ ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ ແລະ ບໍ່ຖືກຕ້ອງ ຕາມກົດໝາຍ;

6. ປະຕິບັດໜ້າທີ່ ດ້ວຍຄວາມປະໝາດ, ເລີ່ນເລີ້ ແລະ ຂາດຄວາມຮັບຜິດຊອບ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VI

## ການຄຸ້ມຄອງ ແລະ ການກວດກາ ວຽກງານຊັບພະຍາກອນທີ່ເປັນຢາ

### ໝວດທີ 1

### ການຄຸ້ມຄອງວຽກງານຊັບພະຍາກອນທີ່ເປັນຢາ

**ມາດຕາ 58 ອົງການຄຸ້ມຄອງວຽກງານຊັບພະຍາກອນທີ່ເປັນຢາ**

ລັດຖະບານ ຄຸ້ມຄອງວຽກງານຊັບພະຍາກອນທີ່ເປັນຢາ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສາທາລະນະສຸກ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງກະສິກຳ ແລະ ປ່າໄມ້, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຊັບພະຍາກອນທີ່ເປັນຢາ ປະກອບດ້ວຍ:

1. ກະຊວງສາທາລະນະສຸກ;
2. ພະແນກສາທາລະສຸກ ແຂວງ, ນະຄອນຫຼວງ;
3. ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 59 ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ**

ໃນການຄຸ້ມຄອງວຽກງານຊັບພະຍາກອນທີ່ເປັນຢາ ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ, ປັບປຸງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ ເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ;

4. ນຳພາ ຊີ້ນຳ ການຄຸ້ມຄອງ, ການສຳຫຼວດຊັບພະຍາກອນທີ່ເປັນຢາ ເພື່ອດັດປັບ ແລະ ກຳນົດບັນຊີຊັບພະຍາກອນທີ່ເປັນຢາແຕ່ລະປະເພດ;

5. ດຳເນີນການສຶກສາຄົ້ນຄວ້າດ້ານວິທະຍາສາດ, ນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ ຊອກຄົ້ນຫາແຮ່ທາດທີ່ເປັນຢາ ເພື່ອພັດທະນາການນຳໃຊ້ ປຸງແຕ່ງ ແລະ ຜະລິດ ເປັນຢາປົວພະຍາດ ແລະ ຜະລິດຕະພັນເສີມສຸຂະພາບ;

6. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ;

7. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ;

8. ສະເໜີລັດຖະບານພິຈາລະນາ ອະນຸຍາດ ການນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ການສົ່ງຜ່ານຊັບພະຍາກອນທີ່ເປັນຢາ ບັນຊີ I;

9. ພິຈາລະນາອະນຸຍາດ ການເຄື່ອນຍ້າຍຊັບພະຍາກອນທີ່ເປັນຢາ ບັນຊີ I ພາຍໃນປະເທດ;

10.ອະນຸຍາດ ການນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ການສົ່ງຜ່ານ ຊັບພະຍາກອນທີ່ເປັນຢາ ບັນຊີ II ແລະ ບັນຊີ III;

11.ສ້າງ ແລະ ຮັບຮອງ ແຜນການຂຸດຄົ້ນ, ເກັບກູ້ ຊັບພະຍາກອນທີ່ເປັນຢາ ບັນຊີ II;

12.ຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຊັບພະຍາກອນທີ່ເປັນຢາ;

13.ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ;

14.ປະສານສົມທົບກັບກະຊວງກະສິກຳ ແລະ ປ່າໄມ້, ກະຊວງພະລັງງານ ແລະ ບໍ່ແຮ່ ໃນການອະນຸຍາດ ຂຸດຄົ້ນ, ເກັບກູ້ ຊັບພະຍາກອນທີ່ເປັນຢາ ບັນຊີ II;

15.ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການປະຕິບັດວຽກງານຊັບພະຍາກອນທີ່ເປັນຢາ;

16. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ;

17. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຊັບພະຍາກອນທີ່ເປັນຢາ ຕໍ່ ລັດຖະບານຢ່າງເປັນປົກກະຕິ;

18. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 60 ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານຊັບພະຍາກອນທີ່ເປັນຢາ ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ;

3. ຄຸ້ມຄອງ, ສໍາຫຼວດຊັບພະຍາກອນທີ່ເປັນຢາ ເພື່ອເກັບກໍາຂໍ້ມູນ ແລະ ສະໜອງຂໍ້ມູນ ໃຫ້ແກ່ ກະຊວງສາທາລະນະສຸກ;

4. ດໍາເນີນການສຶກສາຄົ້ນຄວ້າດ້ານວິທະຍາສາດ, ນໍາໃຊ້ເຕັກໂນໂລຊີ ແລະ ນະວັດຕະກໍາ ຊອກຄົ້ນ ຫາແຮ່ທາດທີ່ເປັນຢາ ເພື່ອພັດທະນາການ ນໍາໃຊ້ ປຸງແຕ່ງ ແລະ ຜະລິດ ເປັນຢາປົວພະຍາດ ແລະ ຜະລິດຕະພັນ ເສີມສຸຂະພາບ;

5. ສະເໜີ ສ້າງ, ບໍາລຸງ, ຍົກລະດັບ ພ້ອມທັງຄຸ້ມຄອງ ແລະ ນໍາໃຊ້ ບຸກຄະລາກອນ ກ່ຽວກັບວຽກງານ ຊັບພະຍາກອນທີ່ເປັນຢາ;

6. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ;

7. ສະເໜີກະຊວງສາທາລະນະສຸກພິຈາລະນາອະນຸຍາດ ການນໍາເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ການສົ່ງຜ່ານ ຊັບພະຍາກອນທີ່ເປັນຢາ ບັນຊີ II ແລະ ບັນຊີ III;

8. ສ້າງ ແລະ ຮັບຮອງ ແຜນການຂຸດຄົ້ນ, ເກັບກູ້ ຊັບພະຍາກອນທີ່ເປັນຢາ ບັນຊີ III;

9. ພິຈາລະນາອະນຸຍາດການເຄື່ອນຍ້າຍຊັບພະຍາກອນທີ່ເປັນຢາ ບັນຊີ II ລະຫວ່າງ ແຂວງຕໍ່ແຂວງ;

10.ຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຊັບພະຍາກອນທີ່ເປັນຢາ;

11. ຮັບ, ພິຈາລະນາ ແລະ ແກ້ໄຂ ຄໍາສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກ ງານຊັບພະຍາກອນທີ່ເປັນຢາ;

12.ປະສານສົມທົບກັບ ພະແນກກະສິກໍາ ແລະ ປ່າໄມ້, ພະແນກພະລັງງານ ແລະ ບໍ່ແຮ່ ໃນການ ອະນຸຍາດ ຂຸດຄົ້ນ, ເກັບກູ້ ຊັບພະຍາກອນທີ່ເປັນຢາ ບັນຊີ III;

13.ປະສານສົມທົບກັບ ພະແນກການ, ອົງການ, ອົງການປົກຄອງຂັ້ນເມືອງ ແລະ ພາກສ່ວນອື່ນທີ່ ກ່ຽວຂ້ອງໃນການປະຕິບັດວຽກງານຊັບພະຍາກອນທີ່ເປັນຢາ;

14.ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ ຕາມການ ມອບ ໝາຍ;

15.ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຊັບພະຍາກອນທີ່ເປັນຢາ ຕໍ່ກະຊວງສາທາ ລະນະສຸກ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

16. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 61 ສິດ ແລະ ໜ້າທີ່ ຂອງຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານຊັບພະຍາກອນທີ່ເປັນຢາ ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ;
2. ເຜີຍແຜ່, ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ;
3. ຄຸ້ມຄອງ, ສໍາຫຼວດຊັບພະຍາກອນທີ່ເປັນຢາ ເພື່ອເກັບກໍາຂໍ້ມູນ ແລະ ສະໜອງຂໍ້ມູນ ໃຫ້ແກ່ ພະແນກສາທາລະນະສຸກ;
4. ພິຈາລະນາອະນຸຍາດ ການເຄື່ອນຍ້າຍຊັບພະຍາກອນທີ່ເປັນຢາ ບັນຊີ II ລະຫວ່າງ ເມືອງຕໍ່ເມືອງ;
5. ອອກເອກະສານຢັ້ງຢືນ ການປູກ, ລ້ຽງ ຊັບພະຍາກອນທີ່ເປັນຢາ;
6. ສະເໜີ ສ້າງ, ບໍາລຸງ, ຍົກລະດັບ ພ້ອມທັງຄຸ້ມຄອງ ແລະ ນໍາໃຊ້ ບຸກຄະລາກອນ ກ່ຽວກັບວຽກງານ ຊັບພະຍາກອນທີ່ເປັນຢາ;
7. ຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ວຽກງານຊັບພະຍາກອນທີ່ເປັນຢາ;
8. ຮັບ, ພິຈາລະນາ ແລະ ແກ້ໄຂ ຄໍາສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ວຽກງານຊັບພະຍາກອນທີ່ເປັນຢາ;
9. ປະສານສົມທົບກັບ ຫ້ອງການ, ອົງການປົກຄອງບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການ ປະຕິບັດວຽກງານຊັບພະຍາກອນທີ່ເປັນຢາ;
10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຊັບພະຍາກອນທີ່ເປັນຢາ ຕໍ່ ພະແນກສາທາ ລະນະສຸກ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;
11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 62 ສິດ ແລະ ໜ້າທີ່ຂອງຂະແໜງການກະສິກໍາ ແລະ ປ່າໄມ້**

ໃນການຄຸ້ມຄອງວຽກງານຊັບພະຍາກອນທີ່ເປັນຢາ ຂະແໜງການກະສິກໍາ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການສາທາລະນະສຸກ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຕິດຕາມ ກວດກາ, ສຶກສາ ຄົ້ນຄວ້າ ການປູກ, ການລ້ຽງ, ນະໂຍບາຍໃນການ ອະນຸລັກ, ປົກປັກຮັກສາ, ພັດທະນາ, ນໍາ ໃຊ້ ພືດ, ຕົ້ນໄມ້ ແລະ ສັດ ທີ່ເປັນຢາ ລວມທັງການອະນຸຍາດ ຂຸດຄົ້ນ, ເກັບກູ້ ຊັບພະຍາກອນທີ່ເປັນຢາ ບົນ ພື້ນຖານແຜນການ ຂຸດຄົ້ນ, ເກັບກູ້ ຂອງຂະແໜງການສາທາລະນະສຸກ, ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມພາລະບົດບາດຂອງຕົນ.

**ມາດຕາ 63 ສິດ ແລະ ໜ້າທີ່ຂອງຂະແໜງການພະລັງງານ ແລະ ບໍ່ແຮ່**

ໃນການຄຸ້ມຄອງວຽກງານຊັບພະຍາກອນທີ່ເປັນຢາ ຂະແໜງການພະລັງງານ ແລະ ບໍ່ແຮ່ ມີ ສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການສາທາລະນະສຸກ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ, ສຶກສາ ຄົ້ນຄວ້ານະໂຍບາຍໃນການ ອະນຸລັກ, ປົກປັກຮັກສາ, ພັດທະນາ, ນໍາໃຊ້ ແຮ່ທາດທີ່ເປັນຢາ ລວມທັງ ສັງລວມແຜນຄວາມຕ້ອງການ ຂຸດຄົ້ນ, ເກັບກູ້ ບົນພື້ນຖານແຜນການຂຸດຄົ້ນ, ເກັບກູ້ຂອງຂະແໜງການ ສາທາລະນະສຸກ, ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມພາລະບົດບາດຂອງຕົນ.

**ມາດຕາ 64 ສິດ ແລະ ໜ້າທີ່ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ໃນການຄຸ້ມຄອງວຽກງານຊັບພະຍາກອນທີ່ເປັນຢາ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີ ສິດ ແລະ ໜ້າທີ່ ປະສານສົມທົບຂະແໜງການສາທາລະນະສຸກ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດສັນ, ກຳນົດຂອບເຂດ ທີ່ດິນ ທີ່ຈະນຳໃຊ້ໃນການປູກ, ລ້ຽງ, ເຂດສ້າງຕັ້ງຫ້ອງປຸງແຕ່ງ ຫຼື ໂຮງງານຜະລິດ ຊັບພະຍາກອນທີ່ເປັນຢາ, ຕິດຕາມ ກວດກາ ວຽກງານສິ່ງແວດລ້ອມຂອງຜູ້ດຳເນີນທຸລະກິດ ເພື່ອຮັບປະກັນບໍ່ໃຫ້ມີຜົນກະທົບຮ້າຍແຮງຕໍ່ສັງຄົມ ແລະ ທຳມະຊາດ, ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມພາລະບົດບາດຂອງຕົນ.

**ມາດຕາ 65 ສິດ ແລະ ໜ້າທີ່ຂອງຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມື ກັບອົງການຄຸ້ມຄອງວຽກງານຊັບພະຍາກອນທີ່ເປັນຢາ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຊັບພະຍາກອນທີ່ເປັນຢາ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານຊັບພະຍາກອນທີ່ເປັນຢາ

**ມາດຕາ 66 ອົງການກວດກາວຽກງານຊັບພະຍາກອນທີ່ເປັນຢາ**

ອົງການກວດກາວຽກງານຊັບພະຍາກອນທີ່ເປັນຢາ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຊັບພະຍາກອນທີ່ເປັນຢາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 58 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 67 ເນື້ອໃນການກວດກາ**

ການກວດກາວຽກງານຊັບພະຍາກອນທີ່ເປັນຢາ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຊັບພະຍາກອນທີ່ເປັນຢາ;
2. ການປະຕິບັດໜ້າທີ່ຂອງການຈັດຕັ້ງ, ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ການເຄື່ອນໄຫວວຽກງານ ແລະ ການດຳເນີນທຸລະກິດ ກ່ຽວກັບຊັບພະຍາກອນທີ່ເປັນຢາ;
4. ເນື້ອໃນອື່ນ ທີ່ເຫັນວ່າຈຳເປັນ.

**ມາດຕາ 68 ຮູບການການກວດກາ**

ການກວດກາຊັບພະຍາກອນທີ່ເປັນຢາ ມີ ສາມຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການໂດຍມີການແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດການັ້ນ ອົງການກວດກາວຽກງານຊັບພະຍາກອນທີ່ເປັນຢາ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ VII
## ວັນອະນຸລັກຊັບພະຍາກອນທີ່ເປັນຢາແຫ່ງຊາດ ແລະ ງົບປະມານ

**ມາດຕາ 69 ວັນອະນຸລັກຊັບພະຍາກອນທີ່ເປັນຢາແຫ່ງຊາດ**

ລັດ ກຳນົດເອົາວັນທີ 13 ພະຈິກ ເປັນວັນອະນຸລັກຊັບພະຍາກອນທີ່ເປັນຢາແຫ່ງຊາດ ດ້ວຍການສ້າງຂະບວນການ, ກິດຈະກຳຕ່າງໆ ເພື່ອປູກຈິດສຳນຶກ ທົ່ວປວງຊົນ ແລະ ສັງຄົມ ໃຫ້ເຫັນຄວາມສຳຄັນ, ເຂົ້າໃຈ, ສົນໃຈ, ເປັນເຈົ້າການ ແລະ ຫວງແຫນ, ປະກອບສ່ວນໃນການ ອະນຸລັກ, ປົກປັກຮັກສາ, ພັດທະນາຊັບພະຍາກອນທີ່ເປັນຢາ ໃຫ້ມີຄວາມອຸດົມສົມບູນ ແລະ ຍືນຍົງ.

**ມາດຕາ 70 ງົບປະມານ**

ງົບປະມານທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານຊັບພະຍາກອນທີ່ເປັນຢາ ໄດ້ມາຈາກ:

1. ງົບປະມານຂອງລັດ;

2. ການຊ່ວຍເຫຼືອຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

3. ການເຄື່ອນໄຫວກິດຈະກຳ ກ່ຽວກັບຊັບພະຍາກອນທີ່ເປັນຢາ ດ້ວຍຮູບການ ຫຼື ວິທີການໃດໜຶ່ງທີ່ຖືກຕ້ອງ;

4. ລາຍຮັບອື່ນທີ່ຖືກຕ້ອງຕາມກົດໝາຍ.

ສຳລັບການຄຸ້ມຄອງ ແລະ ການນຳໃຊ້ງົບປະມານ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 71 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 72 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 73 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 74 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 25 ກັນຍາ 2024 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ